# ການປະຖົມພະຍາບານສຳລັບໂຣກພູມແພ້ຢ່າງແຮງ
# (First Aid for Anaphylaxis)

## ສິ່ງທີ່ສໍ່ສະແດງໃຫ້ເຫັນວ່າເກີດອາການແພ້ຂັ້ນເບົາເຖິງຂັ້ນກາງ
## (SIGNS OF MILD TO MODERATE ALLERGIC REACTION)

- ມີອາການໃຄ່ທີ່ຣິມສົບ, ໜ້າ, ຕາ
- ມີຕຸ່ມໂພງຫຼືຕຸ່ມຄັນເກີດຂຶ້ນ
- ຄັນຍຸບຍິບຢູ່ປາກ
- ເຈັບບໍຣິເວນທ້ອງ, ຮາກ (ນີ້ແມ່ນອາການສໍ່ສະແດງໃຫ້ເຫັນວ່າແມ່ນໂຣກພູມແພ້ຢ່າງແຮງທີ່ເກີດຈາກການແພ້ແມງໄມ້)

## ການປະຕິບັດສຳລັບໂຣກພູມແພ້ຂັ້ນເບົາເຖິງຂັ້ນກາງ
## (ACTION FOR MILD TO MODERATE ALLERGIC REACTION)

- ສຳລັບການແພ້ແມງໄມ້ - ດຶງເອົາໄລອອກຖ້າແນມເຫັນ
- ສຳລັບການແພ້ໝັດ - ໃຫ້ໄປຫາໝໍ ຫຼື ເອົານ້ຳກ້ອນແຊ່ໂຕໝັດໃຫ້ມັນເຢັນຈົນແຂງແລະຕົກອອກ
- ໃຫ້ຢູ່ກັບຄົນເຈັບແລະຂໍຄວາມຊ່ວຍເຫຼືອ
- ໃຫ້ຊອກຫາເຂັມສັກຢາອັດຕະໂນມັດອາເດຣນາລີນ (ເອປີເນຟຣິນ)
- ໃຫ້ໂທຣະສັບຫາຄອບຄົວ/ໂທເບີໂທສຸກເສີນ

**ອາການແພ້ຂັ້ນເບົາເຖິງຂັ້ນກາງ (ເຊັ່ນເກີດຕຸ່ມໂພງຫຼືໃຄ່)**
**ອາດບໍ່ເກີດຂຶ້ນສເມີໄປ ກ່ອນເກີດອາການແພ້ຢ່າງແຮງ (ມີປະຕິກິຣິຍາແພ້ຢ່າງຮຸນແຮງ)**

## ໃຫ້ສັງເກດເບິ່ງການສໍ່ສະແດງຢ່າງໃດຢ່າງນຶ່ງຂອງອາການແພ້ຢ່າງຮຸນແຮງຂ້າງລຸ່ມນີ້
## (WATCH FOR ANY ONE OF THE FOLLOWING SIGNS OF ANAPHYLAXIS)

- ຫາຍໃຈຍາກ/ສຽງຫາຍໃຈຫອບແຮງ
- ລີ້ນໃຄ່
- ມີອາການໃຄ່ໃນຮູຄໍ/ຮູຄໍຕີບ
- ໄອຫອບຫວີດໆຫຼືໄອບໍ່ຢຸດ
- ປາກຍາກ ແລະ/ຫຼື ສຽງແຫບ
- ວິນຫົວບໍ່ເຊົາ ຫຼື ເປັນລົມ
- ຜິວຊີດແລະລ່ອຍໝົດໂຕ (ເດັກນ້ອຍ)

**© ASCIA 2018    ASCIA is the peak professional body of clinical immunology/allergy specialists in Australia and New Zealand**
**© ASCIA 2018    ASCIA** ແມ່ນອົງການຈຸດຮວມສູນວິຊາການຂອງແພດຊ່ຽວຊານດ້ານການປິ່ນປົວກ່ຽວກັບພູມຄຸ້ມກັນ/ການແພ້ ໃນອອສເຕຣເລັຍແລະນິວຊີແລນ

Translated by the WSLHD Translation Service June 2018   **LAO**

# ການປະຕິບັດສໍາລັບອາການແພ້ຢ່າງແຮງ (ມີປະຕິກິຣິຍາແພ້ຢ່າງຮຸນແຮງ) [ACTION FOR ANAPHYLAXIS (SEVERE ALLERGIC REACTION)]



## 1 ໃຫ້ເອົາຄົນນັ້ນນອນຢຽດລົງ
## ຢ່າໃຫ້ລາວຢືນຂຶ້ນຫຼືຍ່າງ

ຖ້າລາວໝົດສະຕິ, ໃຫ້ເອົານອນລົງໃນທ່າງ່ຽງຕະແຄງ

ຖ້າລາວຫັນໃຈຍາກ ປ່ອຍໃຫ້ລາວນັ່ງ

## 2 ໃຊ້ເຂັມສັກຢາອັດຕະໂນມັດອາເດຣນາລີນ

3 ໂທເອົາຣົດພະຍາບານ - 000 (ອອສ) ຫຼື 111 (ນຊ)

4 ໂທຫາຄອບຄົວ/ໂທເບີສຸກເສີນ

5 ອາດຈະໃຫ້ຢາອາເດຣນາລີນຕື່ມອີກເຂັມນຶ່ງຖ້າວ່າຄົນໄຂ້ບໍ່ມີອາການຕອບຮັບຫຼັງຈາກ 5 ນາທີຜ່ານໄປ

6 ຍ້າຍຄົນເຈັບໄປຢູ່ໂຮງພະຍາບານເປັນເວລາຢ່າງນ້ອຍ 4 ຊົ່ວໂມງເພື່ອສັງເກດເບິ່ງອາການ

## ຖ້າສົງໄສ ໃຫ້ໃຊ້ເຂັມສັກຢາອັດຕະໂນມັດອາເດຣນາຍີນ ສັກໃຫ້ຄົນເຈັບ

ໃຫ້ເລີ່ມທໍາການຊ່ວຍຫາຍໃຈແບບ CPR ໃນທຸກໆເວລາທີ່ຄົນເຈັບບໍ່ມີການຕອບຮັບແລະຫັນໃຈບໍ່ເປັນປົກກະຕິ

**ໃຫ້ໃຊ້ເຂັມສັກຢາອັດຕະໂນມັດອາເດຣນາລີນກ່ອນອື່ນໝົດ, ແລ້ວຈຶ່ງໃຊ້ບັ້ງເປົ່າຫຼຸດຜ່ອນຫືດ**

ຖ້າວ່າໃຜຜູ້ນຶ່ງທີ່ຮູ້ກັນວ່າເປັນໂຣກຫືດແລະແພ້ອາຫານ, ແມງໄມ້ ຫຼື ຢາ ເກີດອາການຫາຍໃຈຍາກໃນທັນທີທັນໃດ (ຮວມເຖິງການໄອຫອບຫວີດໆ, ໄອບໍ່ຢຸດ ຫຼື ສຽງແຫບ) ເຖິງວ່າຈະບໍ່ອອກອາການທາງຜິວໜັງກໍຕາມ